ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ.....2828...../ອຄ
ນະຄອນຫຼວງວຽງຈັນ, ວັນທີ.....11 ພະຈິກ.....2025

ຂໍ້ຕົກລົງ
ວ່າດ້ວຍການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດ ດຳລັດ ແລະ ລະບຽບການ ກ່ຽວກັບການຄ້າທາງເອເລັກໂຕຣນິກ

- ອີງຕາມ ດຳລັດ ວ່າດ້ວຍການຄ້າທາງເອເລັກໂຕຣນິກ ສະບັບເລກທີ 296/ລບ, ລົງວັນທີ 12 ເມສາ 2021;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 550/ນຍ, ລົງວັນທີ 01 ກັນຍາ 2025;
- ອີງຕາມ ໜັງສືສະເໜີຂອງກົມການຄ້າພາຍໃນ ສະບັບເລກທີ 0930/ກຄພນ, ລົງວັນທີ 29 ກໍລະກົດ 2025.

ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງ:

ໝວດທີ 1
ບົດບັນຍັດທົ່ວໄປ

ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດດຳລັດ ແລະ ລະບຽບການ ກ່ຽວກັບການຄ້າທາງເອເລັກໂຕຣນິກ ເພື່ອເປັນບ່ອນອີງໃນການປັບໃໝ ແລະ ການນຳໃຊ້ມາດຕະການອື່ນຕໍ່ຜູ້ລະເມີດຢ່າງຖືກຕ້ອງ, ເຂັ້ມງວດ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ແນໃສ່ເຮັດໃຫ້ການເຄື່ອນໄຫວ ກ່ຽວກັບການຄ້າທາງເອເລັກໂຕຣນິກ ໃຫ້ຖືກຕ້ອງສອດຄ່ອງຕາມກົດໝາຍ ແລະ ລະບຽບການ, ຮັບປະກັນປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງລັດ, ຜູ້ດຳເນີນທຸລະກິດ ແລະ ຜູ້ຊົມໃຊ້ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

ມາດຕາ 2 ການປັບໃໝ ແລະ ການນາໃຊ້ມາດຕະການອື່ນ

ການປັບໃໝ ແມ່ນມາດຕະການທາງດ້ານການເງິນ ທີ່ນຳໃຊ້ຕໍ່ຜູ້ລະເມີດທາງດ້ານບໍລິຫານ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ກ່ຽວກັບການຄ້າທາງເອເລັກໂຕຣນິກ.

ການນຳໃຊ້ມາດຕະການອື່ນ ແມ່ນການນຳໃຊ້ມາດຕະການເພີ່ມຈາກການປັບໃໝ ຕໍ່ຜູ້ລະເມີດທາງດ້ານບໍລິຫານ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ກ່ຽວກັບການຄ້າທາງເອເລັກໂຕຣນິກ ເປັນຕົ້ນ ການກ່າວເຕືອນ, ສຶກສາອົບຮົມ, ຍຶດ, ອາຍັດ, ໂຈະ ຫຼື ຍົກເລີກ ໃບຢັ້ງຢືນຮັບຮູ້ ແລະ ໃບອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ.

ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ຜູ້ຄ້າຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນ ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ສ້າງຊ່ອງທາງເອເລັກໂຕຣນິກຂອງຕົນຂຶ້ນ ເພື່ອໂຄສະນາ, ຈຳໜ່າຍສິນຄ້າ ແລະ ບໍລິການ ໂດຍຜ່ານຊ່ອງທາງເວັບໄຊ, ແອັບພິເຄເຊີນ, ໂປຣແກຣມ ຫຼື ຊຸດຄຳສັ່ງອື່ນ;

2. ຜູ້ຄ້າໃນຕະຫຼາດທາງເອເລັກໂຕຣນິກ ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ນຳເອົາສິນຄ້າ ແລະ ບໍລິການຂອງຕົນເອງມາວາງໂຄສະນາ ແລະ ຈຳໜ່າຍຜ່ານຊ່ອງທາງເອເລັກໂຕຣນິກ ຂອງບຸກຄົນ ຫຼື ນິຕິບຸກຄົນ ອື່ນ ທີ່ໃຫ້ບໍລິການຕະຫຼາດທາງເອເລັກໂຕຣນິກ;

3. ຜູ້ໃຫ້ບໍລິການຕະຫຼາດທາງເອເລັກໂຕຣນິກ ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ສ້າງຊ່ອງທາງເອເລັກໂຕຣນິກຂຶ້ນ ເຊັ່ນ: ເວັບໄຊ, ແອັບພິເຄເຊີນ, ໂປຣແກຣມ ຫຼື ຊຸດຄຳສັ່ງອື່ນ ເພື່ອໃຫ້ບໍລິການຜູ້ຄ້າອື່ນ ສາມາດດຳເນີນທຸລະກິດໃນຊ່ອງທາງດັ່ງກ່າວ ໂດຍເກັບຄ່າບໍລິການ ຫຼື ຄ່າຕອບແທນອື່ນ.

ມາດຕາ 4 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ລະເມີດດຳລັດ ແລະ ລະບຽບການ ກ່ຽວກັບການຄ້າທາງເອເລັກໂຕຣນິກ ຢູ່ ສປປ ລາວ.

ໝວດທີ 2
ອັດຕາການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ

ມາດຕາ 5 ປະເພດການລະເມີດຮູບແບບການຄ້າທາງເອເລັກໂຕຣນິກ

ການລະເມີດຮູບແບບການຄ້າທາງເອເລັກໂຕຣນິກ ມີ ສາມ ປະເພດ ດັ່ງນີ້:

1. ການລະເມີດການຄ້າຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນ;
2. ການລະເມີດການຄ້າໃນຕະຫຼາດທາງເອເລັກໂຕຣນິກ;
3. ການລະເມີດການໃຫ້ບໍລິການຕະຫຼາດທາງເອເລັກໂຕຣນິກ.

ມາດຕາ 6 ການລະເມີດການຄ້າຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນ

ການລະເມີດການຄ້າຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນ ຕາມແຕ່ລະກໍລະນີ ດັ່ງນີ້:

1. ດຳເນີນທຸລະກິດ ໂດຍບໍ່ແຈ້ງການຄ້າທາງເອເລັກໂຕຣນິກ ຈະຖືກປັບໃໝ 3,000,000 ກີບຕໍ່ຄັ້ງ ພ້ອມທັງກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດປົດປັນທຶກ;

2. ດຳເນີນທຸລະກິດທີ່ບໍ່ສອດຄ່ອງຕາມຂອບເຂດທີ່ໄດ້ກຳນົດໃນໃບຢັ້ງຢືນຮັບຮູ້ ຫຼື ໃບອະນຸຍາດ ດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ຈະຖືກປັບໃໝ 10,000,000 ກີບຕໍ່ຄັ້ງ ພ້ອມທັງກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດປົດປັນທຶກ;

3. ບໍ່ສະຫຼຸບລາຍງານການເຄື່ອນໄຫວການດຳເນີນການຄ້າທາງເອເລັກໂຕຣນິກ ເປັນປົກກະຕິ ປະຈຳ ຫົກເດືອນ ຈະຖືກປັບໃໝ 3,000,000 ກີບຕໍ່ຄັ້ງ ພ້ອມທັງກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດປົດປັນທຶກ;

4. ດຳເນີນທຸລະກິດຄ້າຂາຍສິນຄ້າ ຫຼື ການບໍລິການ ເກີນຂອບຫ້າມ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ຈະຖືກປັບໃໝ 1,000,000 ກີບຕໍ່ລາຍການ ພ້ອມທັງກ່າວເຕືອນ, ສຶກສາອົບຮົມ ແລະ ທັງຍຶດ ຫຼື ອາຍັດ ສິນຄ້າ ແລະ ເຮັດປົດປັນທຶກ;

5. ດຳເນີນການລະດົມທຶນຜ່ານຊ່ອງທາງການຄ້າທາງເອເລັກໂຕຣນິກ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ສາມສິບສ່ວນຮ້ອຍ (30%) ຂອງມູນຄ່າການລະດົມທຶນຕໍ່ຄັ້ງ ພ້ອມທັງກ່າວເຕືອນ, ສຶກສາອົບຮົມ ແລະ ທັງຍຶດ ຫຼື ອາຍັດ ທຶນທີ່ລະດົມ ແລະ ເຮັດປົດປັນທຶກ;

6. ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ໃນຂັ້ນຕອນແຈ້ງດຳເນີນທຸລະກິດ ຈະຖືກກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດປົດປັນທຶກ;

7. ສະໜອງຂໍ້ມູນ ກ່ຽວກັບສິນຄ້າ ຫຼື ການບໍລິການ ໂດຍບໍ່ສອດຄ່ອງກັບສິນຄ້າ ຫຼື ການບໍລິການຕົວຈິງ ຈະຖືກປັບໃໝ 3,000,000 ກີບຕໍ່ຄັ້ງ ພ້ອມທັງກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດປົດປັນທຶກ;

8. ເກັບກຳ, ນຳໃຊ້ ຫຼື ເຜີຍແຜ່ຂໍ້ມູນຂອງລູກຄ້າ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 5,000,000 ກີບຕໍ່ຄັ້ງ ພ້ອມທັງກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດປົດປັນທຶກ;

9. ສົ່ງຂໍ້ຄວາມທີ່ເປັນການໂຄສະນາສິນຄ້າ ຫຼື ການບໍລິການຂອງຕົນ ບໍ່ຖືກຕ້ອງ ແລະ ຊັດເຈນຕາມຄວາມເປັນຈິງ ກ່ຽວກັບ ປະເພດ, ຊະນິດ, ຄຸນລັກສະນະ, ຄຸນນະພາບສິນຄ້າ, ເຄື່ອງໝາຍການຄ້າ ແລະ ການບໍລິການ, ໂຄສະນາທີ່ມີລັກສະນະສຽດສີ, ໝິ່ນປະໝາດສິນຄ້າ ແລະ ບໍລິການຂອງຜູ້ອື່ນ ຈະຖືກປັບໃໝ 5,000,000 ກີບຕໍ່ຄັ້ງ ພ້ອມທັງກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດປົດປັນທຶກ;

10. ບໍ່ນຳໃຊ້ເຄື່ອງມືການຊຳລະ ຫຼື ສື່ການຊຳລະ ຂອງຜູ້ໃຫ້ບໍລິການຊຳລະ ທີ່ບໍ່ໄດ້ຮັບອະນຸຍາດຈາກທະນາຄານ ແຫ່ງ ສປປ ລາວ ເພື່ອຊຳລະສິນຄ້າ ແລະ ການບໍລິການ ຈະຖືກປັບໃໝ 5,000,000 ກີບຕໍ່ຄັ້ງ ພ້ອມທັງກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດປົດປັນທຶກ;

11. ນຳໃຊ້ບັນຊີເງິນຝາກອື່ນທີ່ບໍ່ແມ່ນບັນຊີເງິນຝາກສະເພາະ ເພື່ອຊຳລະການຄ້າ ແລະ ບໍລິການ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 10,000,000 ກີບຕໍ່ຄັ້ງ ພ້ອມທັງກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດປົດປັນທຶກ;

12. ສະໜອງຂໍ້ມູນບໍ່ຖືກຕ້ອງ, ແອບອ້າງຕົວຕົນເປັນຕົວແທນ, ເປີດເຜີຍຂໍ້ມູນໂດຍບໍ່ໄດ້ຮັບອະນຸຍາດ ແລະ ສ້າງຂໍ້ມູນທາງເອເລັກໂຕຣນິກປອມ ທີ່ສົ່ງຜົນເສຍຫາຍໃຫ້ຜູ້ອື່ນ ຈະຖືກປັບໃໝ 20,000,000 ກີບຕໍ່ຄັ້ງ ພ້ອມທັງກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດປົດປັນທຶກ;

13. ຈຳໜ່າຍສິນຄ້າບໍ່ມີຄຸນນະພາບ, ມາດຕະຖານ, ສິນຄ້າປອມແປງ, ສິນຄ້າລອກຮຽນແບບ, ສິນຄ້າຕ້ອງຫ້າມ, ປະຕິບັດສັນຍາກັບຜູ້ຊົມໃຊ້ບໍ່ຖືກຕ້ອງ ແລະ ຄົບຖ້ວນ, ໂຄສະນາສິນຄ້າ ແລະ ບໍລິການ ບໍ່ຖືກຕ້ອງ ຫຼື ເກີນຄວາມເປັນຈິງ, ຕິດປະກາດ, ຮັບຊຳລະລາຄາສິນຄ້າ ແລະ ບໍລິການ ເປັນເງິນຕາຕ່າງປະ ເທດ ຈະຖືກປັບໃໝ 20,000,000 ກີບຕໍ່ຄັ້ງ ພ້ອມທັງກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດປົດປັນທຶກ.

ມາດຕາ 7 ການລະເມີດການຄ້າໃນຕະຫຼາດທາງເອເລັກໂຕຣນິກ

ການລະເມີດການຄ້າໃນຕະຫຼາດທາງເອເລັກໂຕຣນິກ ຕາມແຕ່ລະກໍລະນີ ດັ່ງນີ້:

1. ດຳເນີນທຸລະກິດ ໂດຍບໍ່ໄດ້ແຈ້ງການຄ້າທາງເອເລັກໂຕຣນິກ ຈະຖືກປັບໃໝ 5,000,000 ກີບຕໍ່ຄັ້ງ ພ້ອມທັງກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດປົດປັນທຶກ;

2. ດຳເນີນທຸລະກິດ ທີ່ບໍ່ສອດຄ່ອງຕາມຂອບເຂດທີ່ກຳນົດໄວ້ໃນໃບອະນຸຍາດດຳເນີນທຸລະກິດ ຈະຖືກປັບໃໝ 10,000,000 ກີບຕໍ່ຄັ້ງ ພ້ອມທັງກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດປົດປັນທຶກ;

3. ບໍ່ສະຫຼຸບລາຍງານການເຄື່ອນໄຫວ ການດຳເນີນການຄ້າທາງເອເລັກໂຕຣນິກ ເປັນປົກກະຕິ ປະຈຳຫົກເດືອນ ຈະຖືກປັບໃໝ 3,000,000 ກີບຕໍ່ຄັ້ງ ພ້ອມທັງກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດປົດປັນທຶກ;

4. ດຳເນີນທຸລະກິດຄ້າຂາຍສິນຄ້າ ຫຼື ການບໍລິການ ເກືອດຫ້າມ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ຈະຖືກປັບໃໝ 1,000,000 ກີບ ຕໍ່ລາຍການ ພ້ອມທັງກ່າວເຕືອນ, ສຶກສາອົບຮົມ ແລະ ທັງຍຶດ ຫຼື ອາຍັດ ສິນຄ້າ ແລະ ເຮັດປົດປັນທຶກ;

5. ສະໜອງຂໍ້ມູນ ທີ່ບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ໃນຂັ້ນຕອນການຂໍອະນຸຍາດດຳເນີນທຸລະກິດ ຈະຖືກ ກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດປົດປັນທຶກ;

6. ສະໜອງຂໍ້ມູນ ກ່ຽວກັບສິນຄ້າ ຫຼື ການບໍລິການ ໂດຍບໍ່ສອດຄ່ອງກັບສິນຄ້າ ຫຼື ການບໍລິການຕົວຈິງ ຈະຖືກປັບໃໝ 5,000,000 ກີບພ້ອມທັງກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດປົດປັນທຶກ;

7. ບໍ່ນຳໃຊ້ເຄື່ອງມືການຊຳລະ ຫຼື ສື່ການຊຳລະຂອງຜູ້ໃຫ້ບໍລິການຊຳລະ ທີ່ບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ເພື່ອຊຳລະສິນຄ້າ ແລະ ການບໍລິການ ຈະຖືກປັບໃໝ 5,000,000 ກີບຕໍ່ຄັ້ງ ພ້ອມທັງກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດປົດປັນທຶກ;

8. ນຳໃຊ້ບັນຊີເງິນຝາກອື່ນ ທີ່ບໍ່ແມ່ນບັນຊີເງິນຝາກສະເພາະ ເພື່ອຊຳລະການຄ້າ ແລະ ບໍລິການ, ຮັກສາລາຍຮັບຈາກການສົ່ງອອກສິນຄ້າ ແລະ ບໍລິການ ຢູ່ຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 10,000,000 ກີບ ຕໍ່ຄັ້ງ ພ້ອມທັງກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດບົດບັນທຶກ;

9. ສະໜອງຂໍ້ມູນບໍ່ຖືກຕ້ອງ, ແອບອ້າງຕົວຕົນເປັນຕົວແທນ, ເປີດເຜີຍຂໍ້ມູນໂດຍບໍ່ໄດ້ຮັບອະນຸຍາດ ແລະ ສ້າງຂໍ້ມູນທາງເອເລັກໂຕຣນິກປອມ ທີ່ສົ່ງຜົນເສຍຫາຍໃຫ້ຜູ້ອື່ນ ຈະຖືກປັບໃໝ 20,000,000 ກີບຕໍ່ຄັ້ງ ພ້ອມທັງກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດບົດບັນທຶກ;

10. ຈຳໜ່າຍສິນຄ້າບໍ່ມີຄຸນນະພາບ, ມາດຕະຖານ, ສິນຄ້າປອມແປງ, ສິນຄ້າລອກຮຽນແບບ, ສິນຄ້າຕ້ອງຫ້າມ, ປະຕິບັດສັນຍາກັບຜູ້ຊົມໃຊ້ບໍ່ຖືກຕ້ອງ ແລະ ຄົບຖ້ວນ, ໂຄສະນາສິນຄ້າ ແລະ ບໍລິການ ບໍ່ຖືກຕ້ອງ ຫຼື ເກີນຄວາມເປັນຈິງ, ຕິດປະກາດ, ຮັບຊຳລະລາຄາສິນຄ້າ ແລະ ບໍລິການ ເປັນເງິນຕາຕ່າງປະເທດ ຈະຖືກປັບໃໝ 20,000,000 ກີບຕໍ່ຄັ້ງ ພ້ອມທັງກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດບົດບັນທຶກ.

ມາດຕາ 8 ການລະເມີດການໃຫ້ບໍລິການຕະຫຼາດທາງເອເລັກໂຕຣນິກ

ການລະເມີດການໃຫ້ບໍລິການຕະຫຼາດທາງເອເລັກໂຕຣນິກ ຕາມແຕ່ລະກໍລະນີ ດັ່ງນີ້:

1. ດຳເນີນທຸລະກິດ ໂດຍບໍ່ໄດ້ຮັບອະນຸຍາດຕາມລະບຽບການ ຈະຖືກປັບໃໝ 5,000,000 ກີບຕໍ່ຄັ້ງ ພ້ອມທັງກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດບົດບັນທຶກ;

2. ດຳເນີນທຸລະກິດ ທີ່ບໍ່ສອດຄ່ອງຕາມຂອບເຂດທີ່ກຳນົດໄວ້ໃນໃບອະນຸຍາດດຳເນີນທຸລະກິດ ຈະຖືກປັບໃໝ 10,000,000 ກີບຕໍ່ຄັ້ງ ພ້ອມທັງກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດບົດບັນທຶກ;

3. ບໍ່ສະຫລຸບລາຍງານການເຄື່ອນໄຫວ ການດຳເນີນການຄ້າທາງເອເລັກໂຕຣນິກ ເປັນປົກກະຕິ ປະຈຳຫົກເດືອນ ຈະຖືກປັບໃໝ 3,000,000 ກີບ;

4. ອະນຸຍາດ ຫຼື ເຜີນເສີຍ ໃຫ້ມີການຄ້າຂາຍສິນຄ້າ ຫຼື ການບໍລິການ ເກືອດຫ້າມ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ຈະຖືກປັບໃໝ 1,000,000 ກີບ ຕໍ່ລາຍການ ພ້ອມທັງກ່າວເຕືອນ, ສຶກສາອົບຮົມ ແລະ ທັງຍຶດ ຫຼື ອາຍັດ ສິນຄ້າ ແລະ ເຮັດບົດບັນທຶກ;

5. ດຳເນີນການລະດົມທຶນ ຜ່ານຊ່ອງທາງການຄ້າທາງເອເລັກໂຕຣນິກ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ສາມສິບສ່ວນຮ້ອຍ (30%) ຂອງມູນຄ່າການລະດົມທຶນຕໍ່ຄັ້ງ ພ້ອມທັງກ່າວເຕືອນ, ສຶກສາອົບຮົມ ແລະ ທັງຍຶດ ຫຼື ອາຍັດ ທຶນທີ່ລະດົມ ແລະ ເຮັດບົດບັນທຶກ;

6. ສະໜອງຂໍ້ມູນ ທີ່ບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ໃນຂັ້ນຕອນແຈ້ງດຳເນີນທຸລະກິດ ຈະຖືກກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດບົດບັນທຶກ;

7. ເກັບກຳ, ນຳໃຊ້ ຫຼື ເຜີຍແຜ່ຂໍ້ມູນຂອງລູກຄ້າ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 5,000,000 ກີບຕໍ່ຄັ້ງ ພ້ອມທັງກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດບົດບັນທຶກ;

8. ສົ່ງຂໍ້ຄວາມທີ່ເປັນການໂຄສະນາສິນຄ້າ ຫຼື ການບໍລິການຂອງຕົນ ບໍ່ຖືກຕ້ອງ ແລະ ຊັດເຈນຕາມຄວາມເປັນຈິງ ກ່ຽວກັບ ປະເພດ, ຊະນິດ, ຄຸນລັກສະນະ, ຄຸນນະພາບສິນຄ້າ, ເຄື່ອງໝາຍການຄ້າ ແລະ ການບໍລິການ, ໂຄສະນາທີ່ມີລັກສະນະສຽດສີ, ໝິ່ນປະໝາດສິນຄ້າ ແລະ ບໍລິການຂອງຜູ້ອື່ນ ຈະຖືກປັບໃໝ 5,000,000 ກີບຕໍ່ຄັ້ງ ພ້ອມທັງກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດບົດບັນທຶກ;

9. ບໍ່ນຳໃຊ້ເຄື່ອງມືການຊຳລະຂອງໃຫ້ຜູ້ບໍລິການຊຳລະ ທີ່ບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ເພື່ອຊຳລະສິນຄ້າ ແລະ ການບໍລິການ ຈະຖືກປັບໃໝ 5,000,000 ກີບຕໍ່ຄັ້ງ ພ້ອມທັງກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດບົດບັນທຶກ;

10. ນຳໃຊ້ບັນຊີເງິນຝາກອື່ນ ທີ່ບໍ່ແມ່ນບັນຊີເງິນຝາກສະເພາະ ເພື່ອຊຳລະການຄ້າ ແລະ ບໍລິການ, ຮັກສາລາຍຮັບຈາກການສົ່ງອອກສິນຄ້າ ແລະ ບໍລິການ ຢູ່ຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 10,000,000 ກີບຕໍ່ຄັ້ງ ພ້ອມທັງກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດບົດບັນທຶກ;

11. ສະໜອງຂໍ້ມູນບໍ່ຖືກຕ້ອງ, ແອບອ້າງຕົວຕົນເປັນຕົວແທນ, ເປີດເຜີຍຂໍ້ມູນໂດຍບໍ່ໄດ້ຮັບອະນຸຍາດ ແລະ ສ້າງຂໍ້ມູນທາງເອເລັກໂຕຣນິກປອມ ທີ່ສົ່ງຜົນເສຍຫາຍໃຫ້ຜູ້ອື່ນ ຈະຖືກປັບໃໝ 20,000,000 ກີບຕໍ່ຄັ້ງ ພ້ອມທັງກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດບົດບັນທຶກ;

12. ຈຳໜ່າຍສິນຄ້າບໍ່ມີຄຸນນະພາບ, ມາດຕະຖານ, ສິນຄ້າປອມແປງ, ສິນຄ້າລອກຮຽນແບບ, ສິນຄ້າຕ້ອງຫ້າມ, ປະຕິບັດສັນຍາກັບຜູ້ຊົມໃຊ້ບໍ່ຖືກຕ້ອງ ແລະ ຄົບຖ້ວນ, ໂຄສະນາສິນຄ້າ ແລະ ບໍລິການ ບໍ່ຖືກຕ້ອງ ຫຼື ເກີນຄວາມເປັນຈິງ, ຕິດປະກາດ, ຮັບຊຳລະລາຄາສິນຄ້າ ແລະ ບໍລິການ ເປັນເງິນຕາຕ່າງປະເທດ ຈະຖືກປັບໃໝ 20,000,000 ກີບຕໍ່ຄັ້ງ ພ້ອມທັງກ່າວເຕືອນ, ສຶກສາອົບຮົມ ທັງຍຶດ ຫຼື ອາຍັດ ສິນຄ້າ ແລະ ເຮັດບົດບັນທຶກ.

ມາດຕາ 9 ການນຳໃຊ້ມາດຕະການອື່ນຕໍ່ຜູ້ລະເມີດ

ບຸກຄົນ ແລະ ນິຕິບຸກຄົນ ທີ່ລະເມີດດຳລັດ ແລະ ລະບຽບການ ກ່ຽວກັບການຄ້າທາງເອເລັກໂຕຣນິກ ນອກຈາກຈະຖືກນຳໃຊ້ມາດຕະການ ຕາມທີ່ກຳນົດໄວ້ໃນມາດຕາ 6, 7 ແລະ 8 ຂອງຂໍ້ຕົກລົງສະບັບນີ້, ຖ້າຫາກຍັງສືບຕໍ່ລະເມີດ ເປັນຄັ້ງທີ ສອງ ຈະຖືກກ່າວເຕືອນ, ສຶກສາອົບຮົມ, ເຮັດບົດບັນທຶກ, ຍຶດ ຫຼື ອາຍັດ ພ້ອມທັງຈະຖືກໂຈະໃບຢັ້ງຢືນຮັບຮູ້ ຫຼື ໃບອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ, ຖ້າຫາກຍັງບໍ່ປັບປຸງແກ້ໄຂຕາມກຳນົດເວລາ ກໍ່ໃຫ້ນຳໃຊ້ມາດຕະການຍົກເລີກໃບຢັ້ງຢືນຮັບຮູ້ ຫຼື ໃບອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ.

ໝວດທີ 3
ການຊຳລະ, ການຄຸ້ມຄອງ ແລະ ນຳໃຊ້ເງິນທີ່ໄດ້ມາຈາກການປັບໃໝ

ມາດຕາ 10 ການຊຳລະເງິນປັບໃໝ

ຜູ້ທີ່ລະເມີດ ການດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ຕ້ອງຊຳລະເງິນປັບໃໝຕາມບົດບັນທຶກການລະເມີດ ທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ໂດຍຊຳລະຜ່ານບັນຊີຂອງກະຊວງອຸດສາຫະກຳ ແລະ ການຄ້າ.

ມາດຕາ 11 ການຄຸ້ມຄອງເງິນທີ່ໄດ້ຈາກການປັບໃໝ

ເງິນທີ່ໄດ້ຈາກການປັບໃໝ ຕາມຂໍ້ຕົກລົງສະບັບນີ້ ຫົກສິບສ່ວນຮ້ອຍ (60%) ມອບເຂົ້າງົບປະມານແຫ່ງລັດ ສ່ວນເງິນທີ່ເຫຼືອ ສີ່ສິບສ່ວນຮ້ອຍ (40%) ໃຫ້ຈັດເປັນລາຍຮັບ-ລາຍຈ່າຍວິຊາການ ແລະ ຂຶ້ນແຜນການນຳໃຊ້ງົບປະມານ ເພື່ອນຳໃຊ້ບໍລິຫານວຽກງານ ຕາມທີ່ກຳນົດໄວ້ໃນມາດຕາ 12 ຂອງຂໍ້ຕົກລົງສະບັບນີ້.

ມາດຕາ 12 ເປົ້າໝາຍການນຳໃຊ້ເງິນທີ່ໄດ້ຈາກການປັບໃໝ

ເງິນທີ່ໄດ້ຈາກການປັບໃໝ ຕ້ອງນຳໃຊ້ເຂົ້າໃນວຽກງານ ດັ່ງນີ້:

1. ການລົງຕິດຕາມ ແລະ ກວດກາ ກ່ຽວກັບການຈັດຕັ້ງປະຕິບັດວຽກງານການຄ້າທາງເອເລັກໂຕຣນິກ ລວມທັງວຽກງານທີ່ຈຳເປັນ ແລະ ຮີບດ່ວນ;

2. ໂຄສະນາ, ເຜີຍແຜ່ນິຕິກຳ, ປຶ້ມຄູ່ມື, ຈັດຝຶກອົບຮົມ ແລະ ຍົກລະດັບຄວາມຮູ້ດ້ານວິຊາການ ກ່ຽວກັບວຽກງານການຄ້າທາງເອເລັກໂຕຣນິກ;

3. ການເກັບມ້ຽນ, ປົກປັກຮັກສາ, ຄ່າຝາກສາງ, ທຳລາຍຜະລິດຕະພັນ ແລະ ສິນຄ້າທີ່ຖືກຍຶດ ຫຼື ອາຍັດ;

4. ການຈັດຊື້ວັດຖຸປະກອນ ແລະ ສິ່ງອຳນວຍຄວາມສະດວກ ເພື່ອຮັບໃຊ້ໃນການຈັດຕັ້ງປະຕິບັດວຽກງານການຄ້າທາງເອເລັກໂຕຣນິກ;

5. ນຳໃຊ້ເຂົ້າໃນວຽກງານອື່ນ ກ່ຽວກັບວຽກງານການຄ້າທາງເອເລັກໂຕຣນິກ.

ໝວດທີ 4
ບົດບັນຍັດສຸດທ້າຍ

ມາດຕາ 13 ການຈັດຕັ້ງປະຕິບັດ

ມອບໃຫ້ກົມການຄ້າພາຍໃນ ເປັນເຈົ້າການປະສານສົມທົບກັບ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ພາກສ່ວນກ່ຽວຂ້ອງ ເຜີຍແຜ່, ແນະນຳ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ມາດຕາ 14 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ກະຊວງອຸດສາຫະກຳ ແລະ ການຄ້າ ລັດຖະມົນຕີ

ມະໄລທອງ ກົມມະສິດ